ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານແຫ່ງ ສ.ປ.ປ.ລ.

ເລກທີ 190 /ທຫລ.

ລະບຽບການສຳລັບການບໍລິການຮັບຊ່ວງຊື້ ຫຼຸດລາຄາຂອງທະນາຄານການຄ້າ.

ທະນາຄານແຫ່ງ ສປປລ (ຕໍ່ໄປນີ້ເອີ້ນວ່າ: ທະນາຄານການຄ້າ) ແຈ້ງໃຫ້ບັນດາທະນາຄານທຸລະກິດ ຊາບວ່າ: ການໃຫ້ສິນເຊື່ອໄລຍະສັ້ນຕາມຂໍ້ກຳນົດເລກທີ 19/ທຫລ ລົງວັນທີ 16/01/1992 ນັ້ນແມ່ນ ຈະໄດ້ລຶບລ້າງຕັ້ງແຕ່ວັນທີ 01/5/1994 ເປັນຕົ້ນໄປ, ພ້ອມດຽວກັນທະນາຄານການຄ້າຈະສ້າງຕັ້ງການ ບໍລິການຮັບຊ່ວງຊື້ຫຼຸດລາຄາຂຶ້ນນັບຕັ້ງແຕ່ເວລານັ້ນເປັນຕົ້ນໄປ.

ການນຳໃຊ້ການບໍລິການຮັບຊ່ວງຊື້ຫຼຸດລາຄາ.

ພັນທະບັດຄັງເງິນຂອງລັດຖະບານທີ່ມີວັນຄົບກຳນົດ 6 ເດືອນລົງມາທີ່ທະນາຄານການຄ້າໄດ້ປະມູນ ຂາຍອອກຫຼືຄັງເງິນແຫ່ງຊາດໄດ້ນຳອອກຈຳໜ່າຍເອງ ແລະ ຮຸ້ນກູ້ຂອງທະນາຄານການຄ້າເອງເທົ່ານັ້ນ ຈຶ່ງສາມາດນຳເອົາມາຂາຍຫຼຸດລາຄາທີ່ທະ ນາຄານການຄ້າໄດ້.

ພັນທະບັດຄັງເງິນແລະຮຸ້ນກູ້ທະນາຄານການຄ້າທີ່ກ່າວມາຂ້າງເທິງນັ້ນຕ້ອງຖືກອອກຢ່າງນ້ອຍສອງ ເດືອນຈຶ່ງສາມາດນຳເອົາມາຂາຍຫຼຸດລາຄາໄດ້ຈົນຮອດວັນຄົບກຳນົດຂອງມັນ ທີ່ທະນາຄານແຫ່ງ ສປປລ.

ການບໍລິການຮັບຊ່ວງຊື້ຫຼຸດລາຄາຂອງທະນາຄານການຄ້າຈະເປີດບໍລິການໃນທຸກໆມື້ ຂອງວັນລັດ ຖະການ ເລີ້ມແຕ່ 8:30 ໂມງເຊົ້າຈົນເຖິງເວລາທີ່ການຊຳລະສະສາງລະຫວ່າງທະນາຄານດ້ວຍກັນ ປິດໃນແຕ່ລະວັນ (ປະມານ16:00ໂມງ). ພັນທະບັດຄັງເງິນຫຼືຮຸ້ນກູ້ຂອງທະນາຄານການຄ້າດັ່ງກ່າວ ສາມາດນຳເອົາມາຂາຍຫຼຸດລາຄາເພື່ອຊຳລະພັນທະກັບທະນາຄານແຫ່ງ ສປປລ ທີ່ເກີດຂຶ້ນໃນເວ ລາມີການຊຳລະສະສາງນຳກັນ.

ອັດຕາດອກເບ້ຍທີ່ທະນາຄານກາງເກັບໃນເວລາຮັບຊ່ວງຊື້.

ບັນດາທະນາຄານທຸລະກິດ ສາມາດພົວພັນນຳທະນາຄານແຫ່ງ ສປປລ ເພື່ອກຳນົດອັດຕາດອກເບ້ຍໃຫ້ແກ່ທຸກຈຳນວນມື້ທີ່ຈະເຖິງກຳນົດຂອງພັນທະບັດຄັງເງິນຫຼືຮຸ່ນກູ້ທະນາຄານກາງ.ທະນາຄານແຫ່ງ ສປປລ ຈະແຈ້ງອັດຕາດອກເບ້ຍທີ່ມີລັກສະນະຊີ້ບອກໃນແຕ່ລະວັນຢູ່ທີ່ກົມບໍລິການທະນາຄານຂອງ ທະນາຄານກາງ.

ອັດຕາດອກເບ້ຍທີ່ທະນາຄານແຫ່ງ ສປປລ ເກັບໃນເວລາຮັບຊ່ວງຊື້ຈະຖືກກຳນົດສູງກ່ວາອັດຕາດອກເບ້ຍຕະຫຼາດສຳລັບຫຼັກຊັບຄ້າຍຄືກັນ.ທະນາຄານແຫ່ງ ສປປລ ສາມາດປ່ຽນອັດຕາດອກເບ້ຍດັ່ງກ່າວໄດ້ທຸກເວລາ.

ວິທີຄິດໄລ່ລາຄາຊຳລະໃຫ້ແກ່ພັນທະບັດຄັງເງິນຫຼືຮຸ່ນກູ້ທະນາຄານກາງ ທີ່ນຳມາຂາຍຫຼຸດລາຄາ.

- ໃນກໍລະນີພັນທະບັດຄັງເງິນ ຫຼືຮຸ່ນກູ້ທີ່ທະນາຄານແຫ່ງ ສປປລ ປະມູນຂາຍ ແມ່ນໃຊ້ສູດຄິດໄລ່ດັ່ງຕໍ່ໄປນີ້: ສົມມຸດວ່າ ມູນຄ່າພັນທະບັດ 1 ລ້ານກີບ (ມູນຄ່າໃນນາມ).

$$\text{ລາຄາຊຳລະ} = \frac{1.000.000,00}{1 + \left(i \times \frac{n}{365}\right)}$$

$$\frac{1.000.000}{1 + \left(0{,}14 \times \frac{180}{365}\right)}$$

i = ອັດຕາດອກເບ້ຍ.

n = ຈຳນວນມື້ທີ່ຈະເຖິງກຳນົດ.

- ໃນກໍລະນີພັນທະບັດຄັງເງິນທີ່ກະຊວງການເງິນເປັນຜູ້ຂາຍເອງນັ້ນ ກ່ອນອື່ນຕ້ອງເອົາມູນຄ່າຂອງໃບພັນທະບັດມາສົມໃຫ້ດອກເບ້ຍທີ່ຈະໄດ້ຮັບ ຖ້າວ່າຮອດວັນຄົບກຳນົດ, ແລ້ວຈະໄດ້ມູນຄ່າໃນນາມຂອງພັນທະບັດດັ່ງກ່າວ. ຈາກນັ້ນກໍ[illegible]

ເມື່ອທະນາຄານທຸລະກິດນຳເອົາພັນທະບັດຄັງເງິນຫຼືຮຸນກູ້ທະນາຄານກາງມາຂາຍຫຼຸດ ລາຄາ, ມູນຄ່າທີ່ຂາຍໄດ້ຈະຖືກຈົດມີເຂົ້າໃນບັນຊີຊຳລະສະສາງຂອງທະນາຄານທຸລະກິດກ່ຽວຂ້ອງທີ່ມີໄວ້ຢູ່ທະນາຄານແຫ່ງ ສປປລ. ໃນກໍລະນີນອກນັ້ນເງິນທີ່ຂາຍໄດ້ດັ່ງກ່າວ, ທະນາຄານແຫ່ງ ສປປລ ຈະສະຫນອງໃຫ້ໃນຮູບ ການຂອງແຊັກເງິນ.

ການຊຳລະຈະຖືກປະຕິບັດໃນວັນດຽວກັນນັ້ນ.

ອື່ນໆ.

ທະນາຄານກາງສະຫງວນສິດໃນການດັດແປງເງື່ອນໄຂຕ່າງໆທີ່ກ່ຽວຂ້ອງກັບລະບຽບການສຳລັບ ການບໍລິການເຄື່ອນໄຫວຮັບຊ່ວງຊື້ຫຼຸດລາຄາຂອງທະນາຄານກາງໄດ້ທຸກເວລາ.

ລະບຽບການສະບັບນີ້ມີຜົນສັກສິດນັບແຕ່ວັນທີ...22/05/..... 1994 ເປັນຕົ້ນໄປ.

ວຽງຈັນ, ວັນທີ 13/04/94

ຜູ້ວ່າການທະນາຄານແຫ່ງ ສປປລ.

ບຸຍບົ່ງ ສຸວັນນະວົງ